ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ
ພະແນກຝຶກອົບຮົມວິຊາການທ່ອງທ່ຽວ

# ໃບສັນຍາການຝຶກອົບຮົມ

ໃບສັນຍາການຝຶກອົບຮົມສະບັບນີ້ ໄດ້ສ້າງຂຶ້ນໂດຍມີຈຸດປະສົງເພື່ອຮັບປະກັນໝາກຜົນຂອງການຝຶກອົບຮົມ ແລະ ເຮັດໃຫ້ຜູ້ເຂົ້າຝຶກໄດ້ຮັບການຝຶກອົບຮົມຢ່າງມີປະສິດທິພາບ. ພ້ອມດຽວກັນນັ້ນ, ກໍເພື່ອເປັນການສ້າງແຮງຜັກດັນທີ່ດີໃຫ້ແກ່ຜູ້ເຂົ້າຝຶກອົບຮົມ ໄດ້ມີຄວາມຫ້າວຫັນ, ມີຄວາມກະຕືລືລົ້ນ, ເອົາໃຈໃສ່ຕໍ່ໜ້າທີ່ຂອງຕົນເອງ ແລະ ຕ້ານປະກົດການຫຍໍ້ທໍ້ອື່ນໆ ເຊິ່ງອາດຈະເກີດຂຶ້ນໃນໄລຍະເວລາທີ່ເຂົ້າຮ່ວມຝຶກອົບຮົມ.

ໃບສັນຍາສະບັບນີ້ ປະກອບມີບັນດາຂໍ້ແນະນຳ ແລະ ລະບຽບ, ເຊິ່ງເປັນຫຼັກປະຕິບັດພື້ນຖານ ແລະ ມີຜົນບັງຄັບໃຊ້ຕະຫຼອດໄລຍະເວລາຂອງການຝຶກອົບຮົມ ໂດຍຜູ້ເຂົ້າຮ່ວມການຝຶກອົບຮົມ ແລະ ພາກສ່ວນ/ອົງການຈັດຕັ້ງທີ່ກ່ຽວຂ້ອງ (ທີ່ຜູ້ເຂົ້າຮ່ວມຝຶກອົບຮົມສັງກັດຢູ່) ຈະຕ້ອງໄດ້ຮັບຊາບ ແລະ ປະຕິບັດຕາມ, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ຜູ້ເຂົ້າຝຶກອົບຮົມຕ້ອງເຂົ້າຮ່ວມການຝຶກອົບຮົມກົງເວລາ ແລະ ຕະຫຼອດໄລຍະຂອງຫຼັກສູດຝຶກອົບຮົມ
2. ຜູ້ເຂົ້າຝຶກອົບຮົມຕ້ອງປະພຶດຕົວຕາມລະບຽບ ແລະ ເຂົ້າຮ່ວມກິດຈະກຳໃນຫຼັກສູດຝຶກອົບຮົມ ຢ່າງມືອາຊີບ
3. ຜູ້ເຂົ້າຝຶກອົບຮົມຕ້ອງປະຕິບັດຕາມທຸກໆເງື່ອນໄຂຂອງຫຼັກສູດ ໂດຍບໍ່ມີເງື່ອນໄຂໃດໆ ເພື່ອທີ່ຈະສາມາດຜ່ານການປະເມີນຜົນ ແລະ ໄດ້ຮັບການຢັ້ງຢືນພາຍຫຼັງສຳເລັດຫຼັກສູດ
4. ຜູ້ເຂົ້າຝຶກອົບຮົມຕ້ອງເຂົ້າຮ່ວມການຝຶກອົບຮົມບໍ່ຫຼຸດ 80% ຂອງແຕ່ລະວິຊາທີ່ຢູ່ໃນຫຼັກສູດຝຶກອົບຮົມ
5. ໃນຕະຫຼອດໄລຍະເວລາຂອງການຝຶກອົບຮົມ, ຜູ້ເຂົ້າຝຶກອົບຮົມບໍ່ສາມາດປະຕິບັດກິດຈະກຳ ຫຼື ວຽກງານອື່ນໆ ທີ່ບໍ່ລວມຢູ່ໃນຫຼັກສູດ ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະຮັບຜິດຊອບການຝຶກອົບຮົມ
6. ໃນກໍລະນີສຸກເສີນ ຫຼື ເກີດເຫດການຈຳເປັນ ທີ່ບໍ່ສາມາດຄາດຄະເນລ່ວງໜ້າໄດ້ເຊັ່ນ: ການເຈັບເປັນ, ເຫດການເສຍຊີວິດຂອງຍາດຕິພີ່ນ້ອງ, ຄອບຄົວ ແລະ ເຫດການສຸດວິໄສອື່ນໆ ຜູ້ເຂົ້າຝຶກອົບຮົມຈະຕ້ອງໄດ້ແຈ້ງໃຫ້ຜູ້ປະສານງານ ຫຼື ຄະນະຮັບຜິດຊອບການຝຶກອົບຮົມຮັບຮູ້ ພ້ອມທັງມີເອກະສານຢັ້ງຢືນ.

ຖ້າຜູ້ເຂົ້າຮ່ວມການຝຶກອົບຮົມ ບໍ່ປະຕິບັດຕາມຂໍ້ແນະນຳ ແລະ ລະບຽບຂອງການຝຶກອົບຮົມ, ຜູ້ກ່ຽວຈະຕ້ອງຖືກປະຕິບັດວິໄນ ຈາກທາງຄະນະຮັບຜິດຊອບການຝຶກອົບຮົມໂດຍບໍ່ມີຂໍ້ຍົກເວັ້ນໃດໆ.

ພວກຂ້າພະເຈົ້າໄດ້ອ່ານ ແລະ ທຳຄວາມເຂົ້າໃຈກ່ຽວກັບບັນດາຂໍ້ແນະນຳ, ລະບຽບ ແລະ ເນື້ອໃນເອກະສານສະບັບນີ້ເປັນທີ່ຮຽບຮ້ອຍແລ້ວ, ແລະ ໄດ້ລົງລາຍເຊັນໄວ້ເປັນຫຼັກຖານດັ່ງລຸ່ມນີ້.

ວັນທີ......../........./.........

**ລາຍເຊັນພາກສ່ວນ/ອົງການຈັດຕັ້ງສັງກັດ** **ລາຍເຊັນຜູ້ເຂົ້າຝຶກອົບຮົມ**

PRINTED